# ກອງປະຊຸມການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການ ໃນລະບົບເອເລັກໂຕຣນິກ 5 ແຂວງພາກໃຕ້




ກອງປະຊຸມການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນລະບົບເອເລັກໂຕຣນິກ 5 ແຂວງ ພາກໃຕ້ ໄດ້ຈັດຂຶ້ນ ໃນວັນທີ 26-27 ມີນາ 2015 ທີ່ ໂຮງແຮມຈຳປາສັກພາເລດ ເມືອງປາກເຊ ແຂວງຈຳປາສັກ ພາຍໃຕ້ການເປັນປະທານຂອງ ທ່ານ ບຸນສະຫວາດ ບຸບຜາ ລັດຖະມົນຕີຊ່ວຍວ່າການກະຊວງຍຸຕິທຳ, ຊຶ່ງກອງປະຊຸມດັ່ງກ່າວ ແມ່ນໄດ້ເນັ້ນໃສ່ວຽກງານຈົດໝາຍເຫດທາງລັດຖະການໃນລະບົບເອເລັກໂຕຣນິກ (E-Gazette) ທີ່ເປັນເຄື່ອງມືຊ່ວຍໃຫ້ ສປປ ລາວ ມີຄວາມໂປ່ງໃສໃນລະບົບກົດໝາຍ ແລະ ໄດ້ມີການເຊື່ອມໂຍງກັບສາກົນ ແລະ ພາກພື້ນ ນອກນັ້ນ ຍັງຊ່ວຍເອື້ອອຳນວຍໃຫ້ທຸກຄົນໄດ້ເຂົ້າໃຈ ແລະ ສາມາດຈັດຕັ້ງປະຕິບັດໄດ້ ໃນກອງປະຊຸມທ່ານລັດຖະມົນຕີຊ່ວຍວ່າການ ໄດ້ເນັ້ນໃຫ້ເຫັນຄວາມສຳຄັນຂອງວຽກງານດັ່ງກ່າວວ່າ ເປັນຕົ້ນ ການສັງລວມເອົາກົດໝາຍ, ນິຕິກຳຕ່າງໆ ໄປລວມສູນໄວ້ບ່ອນດຽວ ແລະ ຕີພິມລົງເວັບໄຊ ຊຶ່ງຈະເຮັດໃຫ້ຜູ່ທີ່ມີຄວາມສົນໃຈ ຮັບຮູ້ ແລະ ເຂົ້າໃຈ ບັນດາກົດໝາຍ ແລະ ນິຕິກຳຕ່າງໆ.

ເວບໄຊຈົດໝາຍເຫດທາງລັດຖະການ (www.laoofficialgazette.gov.la) ໄດ້ເລີ່ມເປີດການນຳໃຊ້ ແລະ ໃຫ້ບໍລິການ ໃນເດືອນຕຸລາ 2013 ໂດຍພາຍໃຕ້ການຄຸ້ມຄອງຂອງກະຊວງຍຸຕິທຳ ແລະ ໄດ້ຮັບທຶນຊ່ວຍເຫລືອ ຈາກອົງການພັດທະນາສາກົນຂອງສະຫະລັດ ຫລື USAID ພາຍໃຕ້ໂຄງການເຊື່ອມໂຍງສາກົນ ແລະ ອາຊຽນຂອງ ລາວ-ສະຫະລັດ ຫລື LUNA II. ເວບໄຊນີ້ແມ່ນເປັນບ່ອນສັງລວມທຸກນິຕິກຳທີ່ເປັນທາງການຂອງ ສປປ ລາວ. ອີງຕາມກົດໝາຍ ວ່າດ້ວຍການສ້າງນິຕິກຳ (2012) ແລ້ວ ທຸກໆນິຕິກຳນັບແຕ່ຂັ້ນສູນກາງ ລົງຮອດ ຂັ້ນແຂວງ ຕ້ອງໄດ້ເອົາມາລົງໃນເວບໄຊຈົດໝາຍເຫດທາງລັດຖະການກ່ອນ ຈຶ່ງຈະເຮັດໃຫ້ນິຕິກຳເຫຼົ່ານັ້ນມີຜົນສັກສິດຕາມກົດໝາຍ. ນອກນັ້ນແລ້ວ, ປະຊາຊົນທົ່ວໄປຍັງສາມາດປະກອບຄວາມຄິດເຫັນຂອງຕົນ ໃສ່ຮ່າງທາບທາມບັນດານິຕິກຳ ທີ່ໄດ້ພິມລົງໃນເວບໄຊຈົດໝາຍເຫດທາງລັດຖະການ ອີກດ້ວຍ.

ຜ່ານການເອົາບັນດານິຕິກຳພິມລົງໃນເວບໄຊຈົດໝາຍເຫດທາງລັດຖະການ ແມ່ນເຫັນໄດ້ຜົນສຳເລັດຢ່າງຫຼວງຫຼາຍ. ໃນປີ 2014 ໄດ້ນຳເອົານິຕິກຳຈຳນວນ 248 ສະບັບ ພິມລົງໃນເວບໄຊດັ່ງກ່າວ, ຈຳນວນການເຂົ້າຊົມເວບໄຊກໍໄດ້ເພີ້ມຂຶ້ນສາມເທົ່າ ນັບແຕ່ເດືອນ ມິຖຸນາ ເຖິງເດືອນ ທັນວາ 2014, ຊຶ່ງລວມທັງຜູ້ເຂົ້າຊົມໃນທົ່ວໂລກ. ແຕ່ເຖິງຢ່າງໃດກໍຕາມການຈັດຕັ້ງປະຕິບັດໃນຂັ້ນແຂວງແມ່ນຍັງບໍ່ສາມາດບັນລຸໄດ້ຕາມຄາດໝາຍເທື່ອ.




ດັ່ງນັ້ນ, ກະຊວງຍຸຕິທຳ ໂດຍໄດ້ຮັບການຊ່ວຍເຫຼືອຈາກໂຄງການ LUNA II ຈຶ່ງໄດ້ຈັດກອງປະຊຸມຂຶ້ນ ພາຍໃຕ້ຫົວຂໍ້ *"ການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນລະບົບອີເລັກໂຕຣນິກ 5 ແຂວງພາກໃຕ້"* ໃຫ້ແກ່ພະນັກງານຈຳນວນ 40 ທ່ານ, ຍິງ 5 ທ່ານ ຊຶ່ງມາຈາກຫ້ອງວ່າການປົກຄອງແຂວງ

ແລະ ພະແນກຍຸຕິທຳແຂວງຈຳປາສັກ, ສະຫວັນນະເຂດ ສາລະວັນ, ເຊກອງ ແລະ ອັດຕະປື ເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານດັ່ງກ່າວ, ຮັບຮູ້ເຖິງຄວາມໝາຍ ຄວາມສຳຄັນ ແລະ ວິທີການນຳສົ່ງນິຕິກຳ ມາພິມລົງໃນເວັບໄຊຈົດໝາຍເຫດທາງລັດຖະການ.

ໃນລະຫວ່າງກອງປະຊຸມ ທ່ານລັດຖະມົນຕີຊ່ວຍວ່າການກະຊວງຍຸຕິທຳ ໄດ້ກ່າວໃນກອງປະຊຸມຕື່ມອີກວ່າ "ສປປ ລາວ ໄດ້ເຂົ້າຮ່ວມເປັນພາຄີກັບຫຼາຍສົນທິສັນຍາສາກົນ ເປັນຕົ້ນແມ່ນ ອົງການການຄ້າໂລກ, ການເຂົ້າຮ່ວມເປັນສະມາຊິກຂອງອາຊຽນ ແລະ ຈະເຂົ້າເປັນສະມາຊິກປະຊາຄົມເສດ ຖະກິດອາຊຽນ ໃນທ້າຍປີ 2015 ນີ້, ສະນັ້ນ, ມັນຈຶ່ງຮຽກຮ້ອງໃຫ້ພວກເຮົາຕ້ອງໄດ້ປະຕິບັດພັນທະຫຼາຍຂຶ້ນ ຊຶ່ງໜຶ່ງໃນນັ້ນກໍແມ່ນພັນທະໃນການໃຫ້ຂໍ້ມູນຂ່າວສານທາງດ້ານກົດໝາຍ ແລະ ນິຕິກຳພາຍໃນຂອງບັນດາປະເທດສະມາຊິກ ເພື່ອຄວາມໂປ່ງໃສໃຫ້ແກ່ບັນດາປະເທດສະມາຊິກໄດ້ຮັບຮູ້ເຖິງກົດໝາຍ ແລະ ລະບຽບການພາຍໃນຂອງປະເທດຕ່າງໆ ຊຶ່ງຈະເປັນການສ້າງຄວາມເຊື່ອໝັ້ນ ແລະ ເງື່ອນໄຂອັນດີ ໃຫ້ນັກລົງທຶນຕ່າງປະເທດເຂົ້າມາລົງທຶນໃນປະເທດເຮົາຫຼາຍຂຶ້ນ." ດັ່ງນັ້ນ, ພວກເຮົາຕ້ອງໄດ້ພິມບັນດານິຕິກຳນັບແຕ່ຂັ້ນສູນກາງລົງຮອດຂັ້ນແຂວງ ລົງໃນເວບໄຊຈົດໝາຍເຫດທາງລັດຖະການ.